

# ການເຂົ້າຮຽນພາກບັງຄັບ

## ຂໍ້ມູນສຳລັບພໍ່ແມ່ແລະຜູ້ດູແລ

ການສຶກສາສຳລັບລູກຂອງທ່ານເປັນສິ່ງສຳຄັນແລະການເຂົ້າຮຽນຢ່າງສະໝ່ຳສະເໝີແມ່ນສິ່ງຈຳເປັນເພື່ອໃຫ້ລູກຂອງທ່ານໄດ້ຮັບຜົນສຳເລັດຢ່າງເຕັມປ່ຽມແລະເພີ່ມພູນໃຫ້ມີທາງເລືອກຂອງການເຮັດວຽກແລະທາງເລືອກຂອງຊີວິດຂອງເຂົາເຈົ້າໃຫ້ຫຼາຍຍິ່ງຂຶ້ນ. ໂຮງຮຽນຫຼວງໃນລັດ NSW ເຮັດວຽກຮ່ວມກັນກັບພໍ່ແມ່ເພື່ອສົ່ງເສີມແລະອູ້ມຊູເດັກນ້ອຍແລະຄົນໜຸ່ມໃຫ້ເຂົ້າຮຽນຢ່າງສະໝ່ຳສເໝີ. ເມື່ອລູກຂອງທ່ານເຂົ້າຮຽນທຸກໆມື້, ການຮຽນກໍຈະງ່າຍຂຶ້ນແລະລູກຂອງທ່ານກໍຈະໄດ້ສ້າງແລະຮັກສາມິດຕະພາບກັບເດັກນ້ອຍຄົນອື່ນໆ.

### ຄວາມຮັບຜິດຊອບຕາມກົດໝາຍຂອງຂ້ອຍແມ່ນຫຍັງ?

ການສຶກສາໃນລັດນິວຊາວທ໌ແວວສ໌ ແມ່ນເປັນການບັງຄັບສຳລັບເດັກນ້ອຍທັງໝົດທີ່ມີອາຍຸລະຫວ່າງຫົກປີແລະອາຍຸຕ່ຳກວ່າຂັ້ນຕ່ຳສຸດ 17 ປີທີ່ອະນຸຍາດໃຫ້ອອກໂຮງຮຽນໄດ້. ປະມວນກົດໝາຍວ່າດ້ວຍການສຶກສາ 1990 ອອກກົດລະບຽບ ໃຫ້ພໍ່ແມ່ຕ້ອງຮັບປະກັນວ່າລູກໆຂອງຕົນທີ່ຍັງຢູ່ໃນອາຍຸເຂົ້າໂຮງຮຽນຕ້ອງຈົດຊື່ເຂົ້າຮຽນ, ແລະ ຕ້ອງໄປເຂົ້າໂຮງຮຽນຢ່າງສະໝ່ຳສະເໝີ, ຫຼື ໄດ້ລົງທະບຽນກັບທາງການມາດຕະຖານການສຶກສາລັດ NSW ເພື່ອຮຽນໜັງສືຢູ່ບ້ານ.

ເມື່ອໄດ້ຈົດຊື່ແລ້ວ, ເດັກນ້ອຍຕ້ອງໄປເຂົ້າຮຽນທຸກມື້ທີ່ເປີດໃຫ້ນັກຮຽນໄປຮຽນ.

### ຄວາມສຳຄັນຂອງການມາຮຽນໃຫ້ທັນເວລາ

ການມາໂຮງຮຽນແລະເຂົ້າຫ້ອງໃຫ້ທັນເວລາ:

- ຮັບປະກັນວ່ານັກຮຽນຈະບໍ່ຂາດໃນການເຮັດກິດຈະກຳການຮຽນສຳຄັນທີ່ໄດ້ວາງຕາຕະລາງອອກໄວ້ໃນແຕ່ລະເຊົ້າ
- ຊ່ວຍນັກຮຽນໃຫ້ຮຽນຮູ້ຄວາມສຳຄັນຂອງການຕົງຕໍ່ເວລາແລະເຮັດສິ່ງທີ່ຕ້ອງເຮັດເປັນປະຈຳ
- ໃຫ້ນັກຮຽນມີເວລາພົບປະທັກທາຍກັບໝູ່ເພື່ອນກ່ອນເຂົ້າຮຽນ
- ຫຼຸດຜ່ອນການຢຸດສະງັກຂອງຫ້ອງຮຽນ.

ການມາເຂົ້າຮຽນຊ້າຖືກບັນທຶກວ່າເປັນການຂາດຮຽນໄປສ່ວນໜຶ່ງແລະຕ້ອງໄດ້ຮັບຄຳອະທິບາຍຈາກພໍ່ແມ່.

### ຖ້າລູກຂ້ອຍຕ້ອງຂາດໂຮງຮຽນຈະເຮັດຢ່າງໃດ?

ໃນບາງໂອກາດ, ລູກຂອງທ່ານອາດຈະຕ້ອງຂາດໂຮງຮຽນ. ເຫດຜົນທີ່ໃຊ້ໄດ້ສຳລັບການຂາດໂຮງຮຽນຂອງນັກຮຽນອາດລວມມີ:

- ນັກຮຽນເຈັບປ່ວຍ, ຫຼື ເປັນພະຍາດຕິດແປດ
- ມີການນັດພົບໝໍແບບຫຼີກລ່ຽງບໍ່ໄດ້
- ຕ້ອງໄດ້ໄປເຂົ້າຮ່ວມວັນພັກທາງສາສະໜາທີ່ໄດ້ຖືກຮັບຮູ້
- ມີກໍລະນີພິເສດ ຫຼື ຮີບດ່ວນໃນຄອບຄົວ ເຊັ່ນ ໄປງານສົ່ງສະການ.

ຫຼັງຈາກທີ່ໄດ້ຂາດໂຮງຮຽນ ທ່ານຕ້ອງໝັ້ນໃຈວ່າພາຍໃນ 7 ວັນ ທ່ານຕ້ອງໃຫ້ຄຳອະທິບາຍແກ່ໂຮງຮຽນຂອງລູກທ່ານເຖິງສາເຫດຂອງການຂາດຮຽນ. ຢ່າງໃດກໍດີ, ຖ້າໂຮງຮຽນບໍ່ໄດ້ຮັບຄຳອະທິບາຍຈາກທ່ານພາຍໃນ 2 ມື້, ທາງໂຮງຮຽນອາດຈະຕິດຕໍ່ມາຫາທ່ານເພື່ອປຶກສາເລື່ອງຂາດໂຮງຮຽນນັ້ນ.

ທ່ານຄູໃຫຍ່ອາດປະຕິເສດບໍ່ຍອມຮັບຄຳອະທິບາຍທີ່ທ່ານໃຫ້ຖ້າເພິ່ນບໍ່ເຊື່ອວ່າການຂາດໂຮງຮຽນນັ້ນເປັນປະໂຫຍດຕໍ່ລູກຂອງທ່ານ. ຢູ່ໃນສະພາບການດັ່ງກ່າວນີ້ ການຂາດໂຮງຮຽນຂອງລູກທ່ານກໍຈະຖືກບັນທຶກໃສ່ວ່າບໍ່ມີເຫດຜົນທີ່ຮັບໄດ້. ເມື່ອສິ່ງນີ້ເກີດຂຶ້ນ ທ່ານຄູໃຫຍ່ກໍຈະປຶກສາກັບທ່ານເລື່ອງການຕັດສິນໃຈແລະເຫດຜົນວ່າຍ້ອນຫຍັງ.

ທ່ານຄູໃຫຍ່ອາດຂໍເບິ່ງໃບຮັບຮອງຈາກແພດຫຼືເອກະສານຢ່າງອື່ນເມື່ອທ່ານອະທິບາຍວ່າການຂາດເລື້ອຍໆຫຼືຂາດເປັນລະຍະຍາວນັ້ນເປັນຍ້ອນການເຈັບປ່ວຍ. ທ່ານຄູໃຫຍ່ອາດຂໍອະນຸຍາດຈາກພໍ່ແມ່ເພື່ອລົມກັບແພດຊ່ຽວຊານສະເພາະເພື່ອໃຫ້ໄດ້ຂໍ້ມູນນຳມາເຮັດແຜນການດູແລສຸຂະພາບຮ່ວມກັນເພື່ອອຸ້ມຊູລູກຂອງທ່ານ. ຖ້າການຮ້ອງຂໍດັ່ງກ່າວຖືກປະຕິເສດ, ທ່ານຄູໃຫຍ່ກໍຈະບັນທຶກການຂາດໂຮງຮຽນນັ້ນວ່າ ບໍ່ມີເຫດຜົນທີ່ຍອມຮັບໄດ້.

## ການເດີນທາງ

ເຮົາຂໍສົ່ງເສີມໃຫ້ຄອບຄົວເດີນທາງໃນລະຫວ່າງໂຮງຮຽນພັກຮໍລິເດ. ຖ້າວ່າຈຳເປັນຕ້ອງເດີນທາງໃນລະຫວ່າງເທີມຮຽນ, ໃຫ້ປຶກສາເລື່ອງນີ້ກັບທ່ານຄູໃຫຍ່ຂອງໂຮງຮຽນຂອງລູກທ່ານ. ທ່ານອາດຕ້ອງໄດ້ຕື່ມໃບຄຳຮ້ອງຂໍພັກລະຍະຍາວ. ການຂາດຮຽນທີ່ກ່ຽວກັບການເດີນທາງຈະຖືກໝາຍໃສ່ວ່າບໍ່ຢູ່ໃນລາຍຊື່ເຂົ້າຮຽນ ແລະ ສະນັ້ນຈຶ່ງຈະຖືກນັບໃສ່ຈຳນວນມື້ຂາດຮຽນທັງໝົດໃນປີນັ້ນຂອງລູກທ່ານ.

ໃນບາງກໍລະນີ ນັກຮຽນອາດຈະມີສິດສະໝັກຮຽນແບບການສຶກສາທາງໄກໃນລະຫວ່າງ ເດີນທາງເປັນເວລາກວ່າ 50 ມື້ຂອງມື້ເຂົ້າຮຽນ. ເລື່ອງນີ້ ທ່ານຕ້ອງໄດ້ປຶກສາກັບທ່ານຄູໃຫຍ່ຂອງໂຮງຮຽນຂອງລູກທ່ານ.

## ລູກຂອງຂ້ອຍບໍ່ຍອມໄປໂຮງຮຽນ, ຂ້ອຍຄວນເຮັດຢ່າງໃດ?

ທ່ານຄວນຕິດຕໍ່ຫາທ່ານຄູໃຫຍ່ໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້ເພື່ອປຶກສາບັນຫາແລະຂໍຄວາມຊ່ວຍເຫຼືອ. ບັນດາຍຸດທະສາດທີ່ຊ່ວຍປັບປຸງການມາເຂົ້າໂຮງຮຽນໃຫ້ດີຂຶ້ນ ອາດລວມເຖິງການສົ່ງໄປຫາທີມສົ່ງເສີມການຮຽນແລະອຸ້ມຊູຂອງໂຮງຮຽນ ຫຼື ເຊື່ອມຕໍ່ລູກຂອງທ່ານໄປຫາເຄືອຂ່າຍອຸ້ມຊູທີ່ເໝາະສົມ. ທ່ານຄູໃຫຍ່ອາດຂໍການອຸ້ມຊູເພີ່ມເຕີມຈາກໂຄງການພົວພັນກັບການຮຽນຢູ່ບ້ານ ຫຼື ເຮັດແຜນປັບປຸງການເຂົ້າຮຽນໃຫ້ດີຂຶ້ນ.

## ຈະເກີດຫຍັງຂຶ້ນຖ້າວ່າລູກຂອງຂ້ອຍສືບຕໍ່ຂາດໂຮງຮຽນແບບຍອມຮັບບໍ່ໄດ້?

ມັນເປັນສິ່ງສຳຄັນທີ່ຕ້ອງເຂົ້າໃຈວ່າກະຊວງສຶກສາອາດຈຳເປັນຕ້ອງໄດ້ດຳເນີນເລື່ອງຂຶ້ນໄປຕື່ມໃນກໍລະນີທີ່ເດັກນ້ອຍທີ່ຍັງຢູ່ໃນອາຍຸເຂົ້າໂຮງຮຽນໄດ້ຂາດໂຮງຮຽນໂດຍບໍ່ມີເຫດຜົນທີ່ຍອມຮັບໄດ້ຫຼາຍໆຄັ້ງຊ້ຳກັນ.

ການດຳເນີນການບາງຢ່າງທີ່ອາດຈະຖືກນຳມາໃຊ້:

- ເອີ້ນປະຊຸມຂອງໂຮງຮຽນແບບບັງຄັບ

ທ່ານອາດຖືກເອີ້ນ, ພ້ອມລູກຂອງທ່ານ, ໃຫ້ໄປເຂົ້າຮ່ວມປະຊຸມຂອງໂຮງຮຽນແບບບັງຄັບ. ການປະຊຸມນີ້ຈະຊ່ວຍລະບຸການອຸ້ມຊູທີ່ລູກທ່ານອາດຈະຕ້ອງໄດ້ຮັບເພື່ອໃຫ້ເຂົາເຈົ້າໄປເຂົ້າໂຮງຮຽນຢ່າງສະໝ່ຳສະເໝີ. ທາງໂຮງຮຽນ, ພໍ່ແມ່ ແລະ ຂະແໜງການຕ່າງໆຈະເຮັດວຽກຮ່ວມກັນເພື່ອສ້າງແຜນ ທີ່ທຸກຄົນຍອມຮັບ (ເອີ້ນວ່າ ພາລະກິດ) ເພື່ອອຸ້ມຊູການເຂົ້າຮຽນຂອງລູກທ່ານ ທີ່ໂຮງຮຽນ.

- ຍື່ນຄຳຮ້ອງຂຶ້ນຫາສານເດັກ - ຄຳສັ່ງໃຫ້ເຂົ້າຮຽນແບບບັງຄັບ

ຖ້າການເຂົ້າຮຽນຂອງລູກທ່ານຍັງຢູ່ໃນສະພາບບໍ່ເປັນໜ້າພຶງພໍໃຈ ທາງກະຊວງອາດຈະຍື່ນຂໍໃຫ້ສານເດັກອອກຄຳສັ່ງເຂົ້າຮຽນແບບບັງຄັບ. ຜູ້ພິພາກສາຂອງສານເດັກອາດຈະອອກຄຳສັ່ງໃຫ້ມີການເປີດປະຊຸມການເຂົ້າຮຽນແບບບັງຄັບຂຶ້ນ.

- ການດຳເນີນຄະດີຢູ່ໃນສານຊັ້ນຕົ້ນ (Local Court)

ພະນັກງານຂອງໂຮງຮຽນແລະຂອງກະຊວງຍັງຕ້ອງຖືເປັນພາລະໃນການເຮັດວຽກຮ່ວມກັນກັບທ່ານເພື່ອແກ້ໄຂບັນຫາທີ່ຂັດຂວາງບໍ່ໃຫ້ລູກຂອງທ່ານເຂົ້າຮ່ວມຮຽນໃນໂຮງຮຽນຢ່າງເຕັມເມັດເຕັມໜ່ວຍ. ໃນກໍລະນີທີ່ເກີດມີການຝ່າຝືນຄຳສັ່ງໃຫ້ເຂົ້າຮຽນແບບບັງຄັບຂຶ້ນ ອາດມີການດຳເນີນການຕື່ມຂຶ້ນອີກຕໍ່ພໍ່ຫຼືແມ່ທີ່ສານຊັ້ນຕົ້ນ. ຜົນຈາກການຕັດສິນຂອງສານອາດແມ່ນການອອກຄຳສັ່ງໃຫ້ເຮັດວຽກໃນຊຸມຊົນຫຼືປັບໄໝ.

## ລູກຂອງຂ້ອຍຈະສາມາດອອກໂຮງຮຽນໄດ້ ເມື່ອຮອດອາຍຸຊໍ່າໃດ?

ບັນດານັກຮຽນທຸກຄົນຢູ່ໃນລັດນິວຊາວທ໌ແວວສ໌ ຕ້ອງຮຽນຈົນຈົບປີ 10 ຫຼືທຽບເທົ່າ. ຫຼັງຈາກປີ 10 ແລ້ວ, ແລະ ເມື່ອເຂົາເຈົ້າອາຍຸຮອດ 17 ປີ, ຈະມີທາງເລືອກທີ່ຍືດຍຸ່ນຢ່າງມາກມາຍໃຫ້ນັກຮຽນເລືອກເພື່ອສຳເລັດການຮ່ຳຮຽນຂອງເຂົາເຈົ້າ.

## ເຮັດວຽກແບບເປັນຄູ່ຮ່ວມ

ກະຊວງສຶກສາແຫ່ງລັດ NSW ຮັບຮູ້ວ່າການເຮັດວຽກແບບປະສານກັນກັບນັກຮຽນແລະຄອບຄົວຂອງເຂົາເຈົ້າແມ່ນວິທີທີ່ດີທີ່ສຸດເພື່ອອຸ້ມຊູໃຫ້ມີການເຂົ້າຮຽນຢ່າງສະໝ່ຳສະເໝີຂອງນັກຮຽນໃນໂຮງຮຽນ.

ພວກເຮົາປາດຖະໜາທີ່ຈະເຮັດວຽກແບບເປັນຄູ່ຮ່ວມກັບທ່ານເພື່ອອຸ້ມຊູລູກຂອງທ່ານໃຫ້ເຂົາເຈົ້າໄດ້ບັນລຸເຖິງໂອກາດຂອງຊີວິດຂອງເຂົາເຈົ້າໄດ້ຢ່າງເຕັມປ່ຽມ.

## ບໍລິການນາຍແປພາສາທາງໂທລະສັບ

ກະລຸນາຕິດຕໍ່ຫາໂຮງຮຽນ ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກນາຍແປພາສາເພື່ອຕິດຕໍ່ຫາໂຮງຮຽນ, ກະລຸນາໂທເລກ 131 450, ໃຫ້ບອກເຂົາເຈົ້າວ່າທ່ານຕ້ອງການພາສາຫຍັງແລະຈົ່ງຂໍໃຫ້ຜູ້ຮັບສາຍໂທລະສັບຫາໂຮງຮຽນໃຫ້. ຜູ້ຮັບສາຍຈະຫາເອົານາຍແປພາສາມາເວົ້າຢູ່ສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າໃດໆສຳລັບບໍລິການນີ້.